**ມິຊຊາອາທິດທີ 4 ກຳນົດບຳເພັນສິນປີ A**

**ວັນທີ 22 ມີນາ 2020**



**ພຣະວໍລະສານໂດຍນັກບຸນຢວງ 9,1,6-9,13-17,34-38 (ແບບສັ້ນ)**

ໃນເວລານັ້ນ, ເມື່ອເວລາຊົງພຣະດຳເນີນໄປ, ພຣະເຢຊູເຈົ້າຊົງທອດພຣະເນດເຫັນຄົນຕາບອດແຕ່ເກີດຜູ້ໜຶ່ງ. ພຣະອົງກໍຖົ່ມນ້ຳລາຍລົງພື້ນດິນ, ກອຍເປັນຕົມ ແລ້ວເອົາມາທາຕາຂອງຄົນຕາບອດພ້ອມທັງສັ່ງວ່າ: ຈົ່ງໄປລ້າງຢູ່ສະຊີໂລເອ ຊຶ່ງແປວ່າ: ຖືກສົ່ງມາ. ຄົນຕາບອດນັ້ນກໍໄດ້ໄປລ້າງແລະຫລົບມາເຫັນຮຸ່ງ. ພວກຄົນໃກ້ຄຽງແລະຜູ້ທີ່ເຄີຍເຫັນເຂົາເປັນຄົນຂໍທານແຕ່ກ່ອນເວົ້າກັນວ່າ: ບໍ່ແມ່ນຄົນນີ້ບໍເຄີຍນັ່ງຂໍທານແຕ່ກ່ອນ? ມີລາງຄົນເວົ້າວ່າແມ່ນລາວນັ້ນແລ້ວ. ລາງຄົນວ່າ: ບໍ່ແມ່ນ, ແມ່ນຄົນຄືຄົນ. ແຕ່ຄົນຕາບອດນັ້ນເວົ້າວ່າ: ແມ່ນເຮົາເອງ. ເຂົາຈຶ່ງພາຄົນຕາບອດແຕ່ກ່ອນໄປຫາພວກຟາຣີເຊວ. ມື້ທີ່ພຣະເຢຊູເຈົ້າຊົງກອຍຕົມແລະທຳໃຫ້ເຂົາເຫັນຮຸ່ງນັ້ນແມ່ນວັນເສົາ. ພວກຟາຣີເຊວຈຶ່ງຖາມຄົນນັ້ນວ່າ: ແນວໃດເຈົ້າຈຶ່ງເຫັນຮຸ່ງ. ເຂົາຕອບວ່າ: ເພິ່ນໄດ້ເອົາຂີ້ຕົມທາຕາຂ້ານ້ອຍ, ຂ້ານ້ອຍໄປລ້າງແລະແນມເຫັນຮຸ່ງ. ຟາຣີເຊວລາງຄົນເວົ້າວ່າ: ຄົນຜູ້ນີ້ບໍ່ໄດ້ມາຈາກພຣະເຈົ້າ, ຍ້ອນເຂົາບໍ່ນັບຖືວັນເສົາ. ລາງຄົນກໍເວົ້າຄັດຄ້ານວ່າ: ຄົນບາບຈະທຳການອັດສະຈັນແບບນີ້ໄດ້ຢ່າງໃດ, ແລ້ວພວກເຂົາກໍເກີດແຕກແຍກກັນ. ພວກເຂົາຍັງຖາມຄົນຕາບອດອີກວ່າ: ເຈົ້າວ່າ ຄົນທີ່ໄດ້ທຳໃຫ້ເຈົ້າເຫັນຮຸ່ງນັ້ນແມ່ນຄົນແນວໃດ? ເຂົາຕອບວ່າ: ແມ່ນປະພາສົກ.

ພວກຟາຣີເຊວຕອບວ່າ: ມຶງເກີດມາມີບາບເຕັມໂຕແລ້ວ ຍັງຈະບັງອາດມາສັ່ງສອນພວກເຮົາບໍ? ແລ້ວພວກນີ້ກໍໄລ່ຄົນດີບອດນັ້ນອອກໜີ. ພຣະເຢຊູເຈົ້າຊາບຂ່າວວ່າ: ຄົນດີບອດຖືກໄລ່ໜີ. ເມື່ອພຣະອົງພົບເຂົາຈຶ່ງກ່າວວ່າ: ເຈົ້າເຊື່ອເຖິງບຸດມະນຸດບໍ? ເຂົາທູນວ່າ: ພຣະອົງເຈົ້າເອີຍ, ບຸດມະນຸດນັ້ນແມ່ນຜູ້ໃດ, ຂ້ານ້ອຍຢາກເຊື່ອເຖິງພຣະອົງ? ພຣະເຢຊູເຈົ້າຕອບວ່າ: ເຈົ້າກໍເຫັນເພິ່ນແລ້ວ, ແມ່ນຜູ້ເວົ້າກັບເຈົ້າຢູ່ດຽວນີ້ເອງ. ເຂົາຈຶ່ງທູນວ່າ: ໂອພຣະອົງເຈົ້າ, ຂ້າພະເຈົ້າຍອມເຊື່ອ. ແລ້ວເຂົາກໍຂາບລົງນຳມັດສະການພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 9,1,6-9,13-17,34-38**

ຕະຫລອດຊ່ວງເວລາສີ່ສິບວັນແຫ່ງກຳນົດບຳເພັນສິນນີ້ ບໍ່ພຽງແຕ່ເປັນເວລາທີ່ພວກເຮົາເຂົ້າໄປໃນທີ່ປ່ຽວພ້ອມກັບພຣະເຢຊູເຈົ້າພາຍໃຕ້ການນຳພາຂອງພຣະຈິດ ເພື່ອຈຳສິນພາວະນາພ້ອມກັບພຣະອົງຜ່ານທາງຄຳພາວະນາ, ການກັບຈິດປ່ຽນໃຈແລະການທຳບຸນກຸສົນ ເພື່ອຊີວິດຂອງພວກເຮົາຈະໄດ້ຄ້າຍຄືແລະສະໜິດສຳພັນກັບພຣະບິດາເຈົ້າຫລາຍຂື້ນເທົ່ານັ້ນ. ແຕ່ກຳນົດບຳເພັນສິນຍັງເປັນໂອກາດອັນເໝາະສົມ, ເປັນເວລາແຫ່ງການເດີນທາງຂອງພວກເຮົາພ້ອມກັບພຣະເຢຊູເຈົ້າເພື່ອມຸ່ງສູ່ນະຄອນເຢລູຊາແລມອັນແມ່ນສະຖານທີ່ຊຶ່ງພຣະອົງຈະຕ້ອງຖືກທໍລະມານ, ຕາຍ ແຕ່ວັນທີສາມພຣະອົງຈະກັບເປັນຄືນມາ. ບົນເສັ້ນທາງນີ້ເອງທີ່ພຣະເຢຊູເຈົ້າໄຂສຳແດງຕົວຂອງພຣະອົງແລະພາລະກິດທີ່ພຣະອົງໄດ້ຮັບຈາກພຣະບິດາເຈົ້າໃຫ້ພວກເຮົາຮູ້ເຊັ່ນ: ເມື່ອກ້າວເຂົ້າສູ່ອາທິດທີໜຶ່ງກຳນົດບຳເພັນສິນພຣະເຢຊູເຈົ້າໄດ້ໄຂສຳແດງໃຫ້ພວກເຮົາຮູ້ວ່າພຣະອົງເປັນພຣະວານາດຂອງພຣະບິດາເຈົ້າ, ພຣະວາຈາແຫ່ງຄວາມຈິງ. ອາໄສພຣະວາຈາເຈົ້ານີ້ພຣະເຢຊູເຈົ້າໄດ້ຊະນະອາຈາເທັດ, ການປະຈົນຫລອກລວງຈາກຜີປີສາດໃນທີ່ປ່ຽວ.

ຕໍ່ມາອາທິດທີສອງກຳນົດບຳເພັນສິນ, ພຣະເຢຊູເຈົ້າໄດ້ເປີດເຜີຍໃຫ້ລູກສິດທັງສາມກໍຄືໃຫ້ພວກເຮົາຮູ້ເຖິງຄວາມຮຸ່ງເຮືອງຂອງພຣະອົງອັນມາຈາກພຣະບິດາເຈົ້າສະຫວັນ ຜ່ານການສຳແດງພຣະກາຍຮຸ່ງເຮືອງຂອງພຣະອົງບົນພູເຂົາ. ແລະພຣະບິດາເຈົ້າກໍໄດ້ກ່າວຢັ້ງຢືນໃຫ້ພວກລູກສິດທັງສາມກໍຄືໃຫ້ພວກເຮົາຮູ້ວ່າ: ພຣະເຢຊູແມ່ນພຣະບຸດສຸດທີ່ຮັກຂອງພຣະອົງແລະພຣະອົງພໍໃຈໃນພຣະບຸດນີ້ທີ່ສຸດ. ໃຫ້ພວກເຮົາເຊື່ອຟັງພຣະບຸດຂອງພຣະອົງເຖີດ (ມທ 17, 5).

ຈາກນັ້ນອາທິດທີສາມກຳນົດບຳເພັນສິນ, ພຣະເຢຊູເຈົ້າກໍສືບຕໍ່ໄຂສຳແດງຕົວຂອງພຣະອົງໃຫ້ຄົນຕ່າງສາດສະໜາ, ຄົນທີ່ບໍ່ຮູ້ຈັກພຣະອົງຄືຍິງສາວຊາມາຣີຮູ້ວ່າ: ພຣະອົງແມ່ນພຣະກຣິສໂຕ, ພຣະເມດຊີອາຜູ້ໄດ້ມາໃນໂລກນີ້ (ຢງ 4, 26). ເມື່ອໄດ້ເຊື່ອໃນພຣະເຢຊູເຈົ້າແລ້ວ, ຍິງສາວຊາມາຣີກໍໄດ້ໄປປະກາດໃຫ້ຊາວຊາມາຣີອື່ນເປັນຈຳນວນຫລາຍມາຮູ້ຈັກແລະເຊື່ອເຖິງພຣະອົງ.

ສ່ວນວັນອາທິດນີ້, ອາທິດທີສີ່ກຳນົດບຳເພັນສິນ, ພຣະເຢຊູເຈົ້າກໍສືບຕໍ່ພາລະກິດຂອງພຣະອົງຄືການໄຂສຳແດງ. ເທື່ອນີ້ບໍ່ແມ່ນໃຫ້ພວກລູກສິດຜູ້ຢູ່ໃກ້ຊິດພຣະອົງ, ບໍ່ແມ່ນໃຫ້ຄົນຕ່າງສາດສະໜາຜູ້ບໍ່ຮູ້ຈັກພຣະອົງ, ແຕ່ແມ່ນໃຫ້ຄົນທີ່ຖືກປະຖິ້ມ, ຄົນຢູ່ຊາຍຂອບສັງຄົມ, ຄົນທີ່ຖືກປະນາມວ່າເປັນຄົນບາບ ອັນແມ່ນຄົນຕາບອດມາແຕ່ກຳເນີດນັ້ນເອງ. ພຣະເຢຊູເຈົ້າບໍ່ພຽງແຕ່ເປີດຕາຂອງເຂົາໃຫ້ເຫັນແສງສະວ່າງແລະຄົນທີ່ຢູ່ຄຽງຂ້າງເຂົາເທົ່ານັ້ນ, ແຕ່ພຣະອົງຍັງເປີດສະຕິປັນຍາ, ເປີດໃຈເຂົາໃຫ້ເຫັນແລະເຊື່ອເຖິງຕົວຂອງພຣະອົງຜູ້ເປັນ "ພຣະບຸດຂອງພຣະເຈົ້າ". ແລະຄົນດີບອດນີ້ກໍໄດ້ເປີດໃຈໃຫ້ພຣະເຢຊູເຈົ້າດ້ວຍການປະກາດຢືນຢັນຄວາມເຊື່ອຂອງເຂົາວ່າ: "ໂອພຣະອົງເຈົ້າ, ຂ້າພະເຈົ້າຍອມເຊື່ອ" (ຢງ 9, 38).

ສຳລັບພວກເຮົາຜູ້ໄດ້ເດີນທາງຮ່ວມກັບພຣະເຢຊູເຈົ້າຕັ້ງແຕ່ເລີ່ມຕົ້ນກຳນົດບຳເພັນສິນຈົນເຖິງວັນນີ້ ພວກເຮົາໄດ້ຮູ້ຈັກຫຍັງແດ່ເຖິງຕົວຂອງພຣະອົງ? ພວກເຮົາເປັນເໝືອນລູກສິດສາມຄົນທີ່ເຫັນພຣະອົງສຳແດງພຣະກາຍຮຸ່ງເຮືອງບົນພູເຂົາແຕ່ບໍ່ເຂົ້າໃຈຄວາມໝາຍບໍ? ຫລືພວກເຮົາເປັນເໝືອນຍິງສາວຊາມາຣີຄົນຕ່າງສາດສະໜາທີ່ເປີດໃຈຮັບຟັງວາຈາຂອງພຣະເຢຊູເຈົ້າແລະເຊື່ອເຖິງພຣະອົງ? ຫລືພວກເຮົາເປັນເໝືອນຄົນຕາບອດທີ່ພຣະເຢຊູເຈົ້າໄດ້ເປີດດວງຕາແຫ່ງຄວາມເຊື່ອຂອງເຂົາ ເພື່ອເຂົາຈະໄດ້ເຫັນພຣະອົງແລະເຊື່ອເຖິງພຣະອົງ? ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ